ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ

ເລກທີ 0010 /ກຄພນ
ນະຄອນຫຼວງວຽງຈັນ, ວັນທີ 04 ມັງກອນ 2017

ເຖິງ: ຜູ້ອຳນວຍການ ບໍລິສັດ ABC
ເລື່ອງ: ຢັ້ງຢືນແຜນການຈຳໜ່າຍ ນ້ຳມັນເຊື້ອໄຟ ປະຈຳປີ 2017.

- ອີງຕາມ ຂໍ້ຕົກລົງສະບັບເລກທີ1785/ອຄ.ຄພນ,ລົງວັນທີ 07 ກັນຍາ2009 ວ່າດ້ວຍການຄຸ້ມຄອງທຸລະກິດນຳເຂົ້າ ແລະ ບໍລິການຂາຍຍົກນ້ຳມັນເຊື້ອໄຟ.
- ອີງຕາມ ໃບສະເໜີຂອງ ບໍລິສັດ ABC ສະບັບເລກທີ 266, ລົງວັນທີ 27/12/2016.

ເພື່ອເຮັດໃຫ້ການຄຸ້ມຄອງວຽກງານທຸລະກິດນ້ຳມັນເຊື້ອໄຟ ຖືກຈັດຕັ້ງປະຕິບັດຢ່າງມີປະສິດທິຜົນ ບົນພື້ນຖານລະບຽບການ ແລະ ຄວາມສາມາດຂອງຮັບຄ້ານສາງ ແລະ ປ້ຳ ຂອງບັນດາບໍລິສັດນ້ຳມັນເຊື້ອໄຟ ຢູ່ ສປປ ລາວ.

ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ຢັ້ງຢືນແຜນການຈຳໜ່າຍນ້ຳມັນເຊື້ອໄຟປະຈຳປີ 2017 ຂອງ ບໍລິສັດ ABC ຊຶ່ງມີລາຍລະອຽດດັ່ງນີ້:

## I. ແຜນການໜ່າຍນ້ຳມັນເຊື້ອໄຟ :

| ລ/ດ | ຈຸດຈຳໜ່າຍ | ແຜນການຈຳໜ່າຍນ້ຳມັນເຊື້ອໄຟ ໃຫ້ປ້ຳນ້ຳມັນ (ລິດ) | | ໝາຍເຫດ |
|---|---|---|---|---|
| | | ແອັດຊັງ 92 | ກາຊວນ 0.05 | |
| 1 | ນະຄອນຫຼວງວຽງຈັນ | 308,203 | 465,086 | ຈຳນວນແຜນຈຳໜ່າຍນີ້ ແມ່ນຈຳໜ່າຍໃຫ້ແກ່ປ້ຳນ້ຳມັນເຊື້ອໄຟ ຊຶ່ງຍັງບໍ່ລວມ ນ້ຳມັນຮັບໃຊ້ໂຄງການ ແລະ ລູກຄ້າທີ່ມີສັນຍາ |
| 2 | ແຂວງຜົ້ງສາລີ | 26,750 | 133,750 | |
| 3 | ແຂວງຫຼວງນ້ຳທາ | 10,700 | 97,798 | |
| 4 | ແຂວງອຸດົມໄຊ | 93,625 | 827,966 | |
| 5 | ແຂວງບໍ່ແກ້ວ | 74,365 | 238,610 | |
| 6 | ແຂວງຫຼວງພະບາງ | 26,750 | 53,500 | |
| 7 | ແຂວງໄຊຍະບູລີ | 748,198 | 4,928,206 | |
| 8 | ແຂວງຊຽງຂວາງ | - | 41,463 | |
| 9 | ແຂວງວຽງຈັນ | 21,400 | 104,860 | |

| | | | | |
|---|---|---|---|---|
| 10 | ແຂວງບໍລິຄຳໄຊ | 74,231 | 71,556 | |
| 11 | ແຂວງສາລະວັນ | 41,998 | 70,888 | |
| 12 | ແຂວງເຊກອງ | 18,725 | 25,413 | |
| 13 | ແຂວງຈຳປາສັກ | 188,855 | 155,150 | |
| 14 | ແຂວງອັດຕະປື | 24,075 | 36,915 | |
| 15 | ແຂວງໄຊສົມບູນ | 31,030 | 17,120 | |
| 16 | ລວມ | **1,688,905** | **7,268,280** | |

**II. ພັນທະທີ່ຕ້ອງປະຕິບັດ :**

ນອກຈາກປະຕິບັດ ຕາມລະບຽບການຄຸ້ມຄອງທຸລະກິດນຳເຂົ້າ ແລະ ບໍລິການຂາຍຍົກນ້ຳມັນເຊື້ອໄຟແລ້ວ ບໍລິສັດ ABC ຕ້ອງປະຕິບັດພັນທະຕື່ມ ດັ່ງນີ້:

- ຕ້ອງສະຫຼຸບ, ລາຍງານ ຈຳນວນສາງ, ປ້ຳ (ຖ້າມີການປ່ຽນແປງ) ແລະ ການຈຳໜ່າຍນ້ຳມັນເຊື້ອໄຟ ໃຫ້ ກົມການຄ້າພາຍໃນ ຊາບເປັນປະຈຳທຸກເດືອນ;
- ຕ້ອງລາຍງານລາຄາ CIF ແລະ ຈຳນວນນຳເຂົ້າໃນແຕ່ລະຄັ້ງໃຫ້ ກົມການຄ້າພາຍໃນ ຊາບທຸກຄັ້ງທີ່ນຳເຂົ້າຕົວຈິງ ເປັນປະຈຳອາທິດ ແລະ ເດືອນ;
- ຕ້ອງແຈ້ງແຜນການຈຳໜ່າຍນ້ຳມັນເຊື້ອໄຟ ຂອງບໍລິສັດຕົນ ພ້ອມທັງການນຳເຂົ້ານ້ຳມັນເຊື້ອໄຟ ແຕ່ລະຄັ້ງໃຫ້ ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ນັ້ນຊາບ;
- ຫ້າມຈຳໜ່າຍນ້ຳມັນເຊື້ອໄຟ ໄປລົງປ້ຳທີ່ບໍ່ແມ່ນຕົວແບບ ແລະ ຕົວແທນຂອງຕົນ, ຖ້າພົບເຫັນການກະທຳຜິດຈະຖືກປະຕິບັດມາດຕະການຕາມກົດໝາຍ;

ການຢັ້ງຢືນແຜນການຈຳໜ່າຍນ້ຳມັນເຊື້ອໄຟສະບັບນີ້ ປ່ຽນແທນ ແລະ ລົບລ້າງ ແຜນຈຳໜ່າຍນ້ຳມັນເຊື້ອໄຟ ປະຈຳປີ 2017 ສະບັບເລກທີ 1465/ກຄພນ, ລົງວັນທີ 30 ທັນວາ 2016 ແລະ ໃຫ້ເລີ່ມຈັດຕັ້ງປະຕິບັດ ນັບແຕ່ <u>ວັນທີ 1 ເດືອນມັງກອນ ຮອດວັນທີ 31 ເດືອນມີນາ 2017</u>.

ສຳລັບແຜນການຈຳໜ່າຍປີ 2017 ຈະອອກກໍຕໍ່ເມື່ອບໍລິສັດປະກອບເອກະສານຄົບຖ້ວນ ຕາມແຈ້ງການສະບັບເລກທີ 2539/ຫອຄ, ລົງວັນທີ 19 ກັນຍາ 2016.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

**ຮັກສາການແທນຫົວໜ້າກົມ**

ກົມການຄ້າພາຍໃນ ກະຊວງອຸດສາຫະກຳ ແລະ ການຄ້າ

**ສຸລິຍົນ ພິລາວົງ**

ບ່ອນນຳສົ່ງ:

- ກົມການນຳເຂົ້າ ແລະ ສົ່ງອອກ 01 ສະບັບ (ເພື່ອຊາບ ແລະ ເປັນບ່ອນອີງ);
- ສຳເນົາ 01 ສະບັບ.